**ມິຊຊາອາທິດທີ 6 ກຳນົດປາສກາ**

**ວັນທີ 26 ພຶດສະພາ 2019**



**ພຣະວໍລະສານໂດຍນັກບຸນຢວງ 14, 23-29**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວກັບພວກອັກຄະສາວົກວ່າ: ຖ້າຜູ້ໃດຮັກເຮົາ ຜູ້ນັ້ນຈະຮັກສາຖ້ອຍຄຳຂອງເຮົາໄວ້; ແລ້ວພຣະບິດາຂອງເຮົາກໍຈະຮັກເຂົາ ແລະພວກເຮົາຈະສະເດັດມາຫາເຂົາແລະຈະຕັ້ງທີ່ພັກອາໄສຢູ່ໃນຕົວເຂົາ. ຜູ້ໃດທີ່ບໍ່ຮັກເຮົາ, ບໍ່ຮັບຖ້ອຍຄຳຂອງເຮົາ. ຖ້ອຍຄຳທີ່ພວກເຈົ້າໄດ້ຍິນນັ້ນບໍ່ແມ່ນຂອງເຮົາ ແຕ່ແມ່ນຂອງພຣະບິດາຜູ້ໄດ້ສົ່ງເຮົາມາ. ເຮົາກ່າວຖ້ອຍຄຳເຫລົ່ານີ້ໃຫ້ພວກເຈົ້າຟັງເວລາເຮົາຍັງຢູ່ກັບພວກເຈົ້າ. ແຕ່ພຣະຈິດເຈົ້າອົງຜູ້ບັນເທົາທີ່ພຣະບິດາຈະສົ່ງມາໃນນາມຂອງເຮົາ ພຣະອົງນັ້ນຈະສັ່ງສອນແລະດົນໃຈພວກເຈົ້າໃຫ້ຈື່ຈຳຖ້ອຍຄຳທຸກຢ່າງທີ່ເຮົາເອງໄດ້ບອກພວກເຈົ້າໄວ້ແລ້ວ.

ເຮົາມອບສັນຕິສຸກໃຫ້ພວກເຈົ້າ, ເຮົາປະທານສັນຕິສຸກຂອງເຮົາໃຫ້ພວກເຈົ້າ. ແຕ່ສັນຕິສຸກທີ່ເຮົາປະທານໃຫ້ນັ້ນບໍ່ຄືຂອງໂລກໃຫ້ດອກ. ພວກເຈົ້າຢ່າມີຄວາມວຸ້ນວາຍໃຈແລະຢ້ານກົວເລີຍ. ພວກເຈົ້າໄດ້ຍິນເຮົາບອກວ່າ: ເຮົາຈາກໄປ ແຕ່ຈະກັບຄືນມາຫາພວກເຈົ້າ. ຖ້າພວກເຈົ້າຮັກເຮົາແທ້ ພວກເຈົ້າຄົງມີຄວາມດີໃຈເຫັນເຮົາກັບຄືນເມືອຫາພຣະບິດາ. ຍ້ອນວ່າພຣະບິດາໃຫຍ່ກວ່າເຮົາ. ແລະດຽວນີ້, ເຮົາບອກພວກເຈົ້າກ່ອນເຫດການນັ້ນຈະເປັນມາ ເພື່ອວ່າເວລາມັນເປັນມາແລ້ວພວກເຈົ້າຈະໄດ້ເຊື່ອ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢຎ 14, 23-29**

ພວກເຮົາຢູ່ໃນອາທິດທີ 6 ກຳນົດປາສກາ ໝາຍວ່າຍັງອີກອາທິດດຽວເທົ່ານັ້ນແມ່ນວັນຊຶ່ງພຣະກຣິສຕະຈັກສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນຄືນເມືອຫາພຣະບິດາເພື່ອຈັດຕຽມບ່ອນໄວ້ໃຫ້ພວກເຮົາ. ແລະວັນອາທິດຫລັງອາທິດທີ 7 ກຳນົດປາສກາ ພຣະກຣິສຕະຈັກກໍຈະສະຫລອງວັນພຣະຈິດເຈົ້າສະເດັດລົງມາແລະກໍເປັນວັນສະຫລຸບກຳນົດປາສກາອີກດ້ວຍ.

ດັ່ງນັ້ນ, ວາຈາຂອງພຣະເຈົ້າທີ່ພວກເຮົາຟັງໃນວັນນີ້ຈຶ່ງເປັນເໝືອນຄຳສັ່ງລາຂອງພຣະເຢຊູເຈົ້າກ່ອນທີ່ພຣະອົງຈະກັບເມືອຫາພຣະບິດາ. ແລະສິ່ງທີ່ພຣະອົງຢາກຝາກໄວ້ໃຫ້ພວກລູກສິດກໍຄືໃຫ້ພວກເຮົາແຕ່ລະຄົນຄືວາຈາຂອງພຣະອົງ. ເພາະວາຈານີ້ຈະທຳໃຫ້ພວກເຮົາສະໜິດສຳພັນກັບພຣະອົງແລະພຣະບິດາ ແລະເປັນຕົ້ນວາຈານີ້ຈະທຳໃຫ້ພວກເຮົາແຕ່ລະຄົນເປັນໜຶ່ງດຽວກັນ. ແລະໝາກຜົນຂອງຄວາມເປັນໜຶ່ງດຽວກັນນີ້ຄືຄວາມຮັກ. ເພາະພຣະເຈົ້າຂອງພວກເຮົາເປັນອົງແຫ່ງຄວາມຮັກ. ແລະຄົນອື່ນຈະຮູ້ວ່າພວກເຮົາແມ່ນລູກສິດຂອງພຣະເຢຊູເຈົ້າກໍຍ້ອນຄວາມຮັກທີ່ພວກເຮົາມີຕໍ່ກັນແລະກັນ. ແຕ່ຄວາມຮັກນີ້ບໍ່ໄດ້ງ່າຍໃນການປະຕິບັດ ຍ້ອນວາຈາຂອງພຣະເຈົ້າຍັງບໍ່ຢັ່ງຮາກເລິກໃນຈິດໃຈຂອງພວກເຮົາ.

ເພາະສະນັ້ນ, ເມື່ອເວລາພຣະເຢຊູເຈົ້າກັບຄືນເມືອຫາພຣະບິດາ ພຣະອົງຈຶ່ງສັນຍາວ່າຈະສົ່ງພຣະຈິດເຈົ້າລົງມາຢູ່ກັບພວກເຮົາ. ອົງພຣະຈິດເຈົ້ານີ້ຈະທຳໃຫ້ພວກເຮົາຈື່ຈຳສິ່ງທີ່ພຣະເຢຊູເຈົ້າໄດ້ບອກສອນພວກເຮົາ. ອົງພຣະຈິດເຈົ້ານີ້ຈະທຳໃຫ້ພວກເຮົາເຂົ້າໃຈວາຈາຂອງພຣະເຢຊູເຈົ້າ ແລະເປັນຕົ້ນອົງພຣະຈິດເຈົ້ານີ້ຈະເຜົາສຸມດວງໃຈຂອງພວກເຮົາໃຫ້ມີຄວາມຮ້ອນຮົນສັດທາໃນຄວາມຮັກຕໍ່ພຣະເຈົ້າແລະຕໍ່ເພື່ອນພີ່ນ້ອງຂອງພວກເຮົາ. ແຕ່ພຣະຈິດເຈົ້າບໍ່ໄດ້ທຳງານຜູ້ດຽວ, ພຣະອົງຕ້ອງການຄວາມຮ່ວມມືຈາກພວກເຮົາຄືໃຫ້ພວກເຮົາເປີດໃຈເພື່ອຮັບເອົາພຣະຈິດເຈົ້າ.

ວາຈາຂອງພຣະເຈົ້າໃນວັນນີ້ບໍ່ພຽງແຕ່ຊ່ວຍພວກເຮົາໃຫ້ເຂົ້າໃຈຄວາມໝາຍຂອງງານສະຫລອງທີ່ຈະມາເຖິງຄືວັນພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ ແລະວັນພຣະຈິດເຈົ້າສະເດັດລົງມາ. ແຕ່ວາຈາຂອງພຣະເຈົ້າຍັງສະແດງອອກເຖິງຄວາມຮັກ, ຄວາມຫວ່ງໄຍຂອງພຣະເຢຊູເຈົ້າທີ່ມີຕໍ່ພວກເຮົາ. ເຖິງວ່າພຣະອົງຈະຄືນເມືອຫາພຣະບິດາ ແຕ່ພຣະອົງກໍຍັງຢູ່ກັບພວກເຮົາໃນວາຈາຂອງພຣະອົງ, ໃນຄວາມຮັກຂອງອົງພຣະຈິດເຈົ້າທີ່ຢູ່ໃນຕົວຂອງພວກເຮົາແຕ່ລະຄົນ. ດັ່ງທີ່ພຣະອົງກ່າວໄວ້ວ່າ: ເຮົາຈະຢູ່ນຳພວກເຈົ້າຕະຫລອດໄປຈົນເຖິງວັນສຸດທ້າຍ.

ຂໍໃຫ້ຄວາມຮັກຂອງພຣະເຈົ້າຜ່ານທາງວາຈາຂອງພຣະອົງເປີດໄຂດວງໃຈແລະສະຕິປັນຍາຂອງພວກເຮົາ ເພື່ອພວກເຮົາຈະໄດ້ເຂົ້າໃຈຄຳສອນຂອງພຣະເຢຊູເຈົ້າແລະນຳມາປະຕິບັດໃນຊີວິດກຣິສຕັງຂອງພວກເຮົາ. ເພື່ອທຸກຄົນຈະໄດ້ຮູ້ວ່າພວກເຮົາແມ່ນລູກສິດຂອງພຣະເຢຊູເຈົ້າຜ່ານທາງຄວາມຮັກທີ່ພວກເຮົາມີຕໍ່ພຣະອົງແລະຕໍ່ກັນແລະກັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ